*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, 03F, 356-363*
*https://doi.org/10.69692/SUJMRD1203F356*

# Implementing Inspection Works of the Ministry of Education and Sports

**Vankeo Xayyalad[1*], Bounsou Xayyasone[2], Nilavanh BouppHavanh[3]**
*[1,2,3]Faculty of Education, National University of Laos*

***Correspondence**: Vankeo Xayyalad, *Master's Degree Student, Faculty of Education, National University of Laos*
*Tel: +856 20 56 659 199, Email: vankeoxayyalad@gmail.com*

**Article Info:**
**Submitted: August 25, 2026**
**Revised: August 27, 2026**
**Accepted: September 2, 2026**

**Abstract**

This research investigated the implementation of inspection work in the Ministry of Education and Sports (MoES). The objectives were to: (1) examine the current situation of inspection work implementation, (2) develop recommendations for improvement, and (3) evaluate the proposed recommendations. A mixed-methods research design was conducted in three phases. Phase 1 collected questionnaire data from 128 administrators and technical officers. Phase 2 developed recommendations through structured interviews with 10 administrators at ministerial, provincial, and district levels. Phase 3 evaluated the proposed recommendations through a questionnaire administered to 12 experts. Data were analyzed using frequency, percentage, mean, and standard deviation.

The findings showed that: (1) the overall implementation of inspection work at the MoES was at a high level, with all dimensions also rated high. Monitoring and Evaluation received the highest mean score, followed by Party Inspection, while Research on Complaints and Petitions received the lowest mean, (2) Key recommendations included clearly defining and regularly implementing inspection plans; strengthening enforcement of inspection-related laws and regulations; involving relevant sectors in developing and revising regulations; strictly applying legal and disciplinary measures against corruption; and ensuring that complaints and petitions are handled comprehensively, accurately, objectively, and fairly. Inspection mechanisms should also be improved with staff participation throughout the process and (3) The overall evaluation of the recommendations showed high levels of both appropriateness and feasibility. Research on Complaints and Petitions received the highest appropriateness rating and high feasibility, followed by State Inspection, which also achieved the highest appropriateness level. Party Inspection demonstrated high feasibility. Research, revision, and dissemination of legislation had the lowest appropriateness rating among the high-level categories, while organizational restructuring and staff capacity building had the lowest feasibility rating, although it remained high.

**Keywords**: *Implementation, Inspection Work, Education and Sport*

## 1. ພາກສະເໜີ

ການກວດກາ ເປັນວຽກງານໜຶ່ງທີ່ພັກ ແລະ ລັດຖະບານ ຖືເອົາເປັນປັດໄຈໃນການຄົງຕົວ ແລະ ການຂະຫຍາຍຕົວຂອງປະເທດຊາດ. ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ໄດ້ກຳນົດບົດບາດໃນການຕິດຕາມ, ກວດກາ ຕາມລັດຖະທຳມະນູນ ແລະ ກົດໝາຍ. ພັກໄດ້ເນັ້ນໃສ່ວຽກງານກວດກາໃນການປັບປຸງກໍ່ສ້າງພັກ ແລະ ການຄຸ້ມຄອງລັດໃຫ້ໄປຕາມທິດປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນຕາມນະໂຍບາຍຂອງພັກວາງອອກ. ຈາກແນວທາງ ແລະ ທັດສະນະຂອງພັກທີ່ໄດ້ກຳນົດອອກ, ລັດຖະບານກໍໄດ້ນຳມາຜັນຂະຫຍາຍ ເພື່ອສ້າງເປັນນະໂຍບາຍ ໂດຍມີການສ້າງເປັນກົດໝາຍທີ່ກ່ຽວຂ້ອງກັບວຽກງານກວດກາ ເຊິ່ງສະແດງອອກຈາກການສ້າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍວ່າດ້ວຍການກວດກາລັດ ແລະ ນິຕິກຳອື່ນໆ. ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກໍໄດ້ກຳນົດການກວດກາຂອງແຕ່ລະອົງການທີ່ຂຶ້ນກັບລັດ ເຊິ່ງແຕ່ລະພາກສ່ວນກໍມີພາລະບົດບາດໃນການກວດກາອົງການຂອງຕົນຕາມທີ່ໄດ້ກຳນົດໄວ້. ພັກເຮົາຍາມໃດກໍຢືນຢັນວ່າ ວຽກງານກວດກາແມ່ນໜຶ່ງໃນພາລະບົດບາດ ແລະ ແບບແຜນການນຳພາທີ່ສຳຄັນຂອງພັກ "ບໍ່ມີການກວດກາກໍໝາຍຄວາມວ່າ ບໍ່ມີການນຳພາ" (ຄະນະບໍລິຫານງານສູນກາງພັກ, 2016, ໜ້າ. 73-74). ວຽກງານກວດກາ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນຕໍ່ທຸກອົງການ ແລະ ທຸກພາກສ່ວນເນື່ອງຈາກວ່າວຽກງານກວດກາເປັນສິ່ງໜຶ່ງທີ່ສຳຄັນສຳລັບຜູ້ບໍລິຫານໃນການປະເມີນປະສິດທິພາບ ແລະ ປະສິດທິຜົນຂອງການປະຕິບັດໜ້າທີ່ວຽກງານທີ່ພັກ-ລັດມອບໝາຍໃຫ້ ແລະ ການຄວບຄຸມພາຍໃນຂອງການຈັດຕັ້ງໃດໜຶ່ງ. ການກວດກາແນໃສ່ເພື່ອເຮັດໃຫ້ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດທີ່ວາງອອກສອດຄ່ອງກັບສະພາບຄວາມເປັນຈິງ. ການກວດກາຍັງໝາຍ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ເຖິງການກວດສອບການຈັດຕັ້ງປະຕິບັດໃດໜຶ່ງ ເພື່ອໃຫ້ດີຂຶ້ນກວ່າເກົ່າ ແລະ ຖືກຕາມລະບຽບການ. ກະຊວງສຶກສາທິການ ແລະ ກິລາ ເປັນຂະແໜງການໜຶ່ງຂອງລັດທີ່ດຳລັດຂອງນາຍົກລັດຖະມົນຕີໄດ້ວາງອອກໃນວັນທີ 18 ພະຈິກ 2021 ທີ່ໄດ້ກຳນົດການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງດັ່ງກ່າວ (ລັດຖະບານ ແຫ່ງ ສປປ ລາວ, 2021). ໂດຍອີງຕາມດຳລັດດັ່ງກ່າວ, ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາໄດ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມກວດກາ ໃນວັນທີ 23 ມັງກອນ 2023. ກົມກວດກາ ແມ່ນກົງຈັກໜຶ່ງທີ່ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ໃນການຕິດຕາມ, ກວດສອບ, ກວດກາ, ປະເມີນຜົນ, ວຽກງານສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ, ຄົ້ນຄວ້າຄຳຮ້ອງ-ຄຳສະເໜີ, ຮັບແຈ້ງຊຸບສົນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນ. ນອກຈາກນັ້ນ, ກົມກວດກາກໍຍັງໄດ້ເອົາໃຈໃສ່ຈັດຕັ້ງເຜີຍແຜ່ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍ, ບັນດາມະຕິ, ຄຳສັ່ງ, ແຜນພັດທະນາທີ່ວາງອອກແຕ່ລະໄລຍະ ເພື່ອຮັບປະກັນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເຂັ້ມງວດ. ກົມກວດກາ ຍັງມີພາລະບົດບາດໃນການດຳເນີນການຕິດຕາມ, ກວດກາການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດຢ່າງເປັນປົກກະຕິ ເພື່ອກຳຈັດປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທົ່ວທຸກຂົງເຂດໃນຂະແໜງການສຶກສາ ແລະ ກິລາ (ກະຊວງສຶກສາທິການ ແລະ ກິລາ, 2024). ໃນໄລຍະຜ່ານມາ ຄະນະພັກ ແລະ ຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະແມ່ນກົມກວດກາ ມີໜ້າທີ່ໃນການປະຕິບັດພາລະບົດບາດວຽກງານຕິດຕາມກວດກາ ກໍໄດ້ເອົາໃຈໃສ່ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ແຜນພັດທະນາການສຶກສາ ແລະ ກິລາ ໃນແຕ່ລະໄລຍະໃຫ້ເປັນຮູບປະທຳເທື່ອລະກ້າວ, ໃນນີ້ແມ່ນໄດ້ເອົາໃຈໃສ່ຕໍ່ການປະຕິບັດວຽກງານຕິດຕາມ ກວດກາ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງເປັນແຕ່ລະໄລຍະດ້ວຍຄວາມຮັບຜິດຊອບສູງ (ກະຊວງສຶກສາທິການ ແລະ ກິລາ, 2021). ແຕ່ເຖິງຢ່າງໃດກໍຕາມວຽກງານດັ່ງກ່າວກໍຍັງພົບບັນຫາ ແລະ ອຸປະສັກຫຼາຍຢ່າງຊຶ່ງເປັນສິ່ງທ້າທາຍໃນການກວດກາເຊັ່ນ: ການປະຕິບັດພາລະບົດບາດວຽກງານກວດກາ ຍັງມີລັກສະນະແບບລວມໆ ບໍ່ທັນເຮັດໄດ້ໝົດຕາມພາລະບົດບາດຂອງຕົນ ໂດຍສະເພາະແມ່ນຍັງບໍ່ທັນໄດ້ລົງເລິກກວດກາ ການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ຂອງບັນດາກົມກອງອ້ອມຂ້າງໃນສຳນັກກະຊວງສຶກສາທິການ ແລະ ກິລາ ຢ່າງເຕັມສ່ວນ, ພະນັກງານທີ່ເຮັດວຽກງານກວດກາຕົວຈິງ ຍັງບໍ່ທັນໄດ້ຍົກລະດັບວິຊາສະເພາະການກວດກາຢ່າງເປັນລະບົບ, ຍັງມີລັກສະນະທັງເຮັດທັງຮຽນກັບວຽກງານຕົວຈິງ. ການຄົ້ນຄວ້າວິເຄາະ ແລະ ວິໄຈຂໍ້ມູນການກວດກາ ຍັງບໍ່ທັນເລິກເຊິ່ງ, ຮັດກຸມຢ່າງແທ້ຈິງ, ລະບົບການຈັດຕັ້ງວຽກງານກວດກາ ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ເຂັ້ມແຂງດ້ານປະລິມານ ແລະ ຮັບປະກັນຄຸນນະພາບ, ການຈັດຕັ້ງປະຕິບັດບັນດາຫຼັກການ, ຮູບການກວດກາຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ. ນິຕິກຳກ່ຽວກັບວຽກງານຕິດຕາມ ກວດກາ ແລະ ປະເມີນຜົນຍັງບໍ່ທັນຮັດກຸມ ແລະ ບໍ່ທັນຄົບຖ້ວນ, ອັນທີ່ມີແລ້ວບາງພາກສ່ວນກໍຍັງບໍ່ທັນໄດ້ມີການຄົ້ນຄວ້າ ເຊື່ອມຊຶມ ຜັນຂະຫຍາຍຢ່າງເລິກເຊິ່ງ, ການຈັດຕັ້ງປະຕິບັດບໍ່ໄດ້ຮັບປະສິດທິຜົນສູງເທົ່າທີ່ຄວນ, ກົງຈັກການຈັດຕັ້ງຢູ່ຂັ້ນຮາກຖານພັກຍັງບໍ່ທັນຄົບຖ້ວນ, ຄວາມເປັນເຈົ້າການຂອງຄະນະກວດກາພັກຈຳນວນໜຶ່ງໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ສິດຂອງຕົນບໍ່ທັນເຂັ້ມແຂງ, ການຕິດຕາມກວດກາ ບາງຂັ້ນຍັງບໍ່ຮັບປະກັນຄວາມຖືກຕ້ອງ, ຊັດເຈນ, ທັນການ, ເຂັ້ມງວດຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ. ເຄື່ອງມືການຕິດຕາມ ກວດກາ ແລະ ປະເມີນຜົນຍັງບໍ່ທັນເປັນລະບົບ, ຄວາມຮູ້, ຄວາມສາມາດ, ບົດຮຽນ ແລະ ປະສົບການຕົວຈິງໃນວຽກງານກວດກາຍັງຈຳກັດ, ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ, ການກວດກາສະເພາະກິດ ມີບາງເລື່ອງຊັກຊ້າແກ່ຍາວ ແລະ ບໍ່ທັນເຂັ້ມງວດຕາມລະບຽບກົດໝາຍ (ກະຊວງສຶກສາທິການ ແລະ ກິລາ, 2024, ໜ້າ. 11). ບັນຫາເຫຼົ່ານີ້ມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຮັບການວິເຄາະວິໄຈເພື່ອຫາທາງແກ້ໄຂ. ຜົນຂອງການຄົ້ນຄວ້າຄັ້ງນີ້ ຈະເປັນຂໍ້ມູນໃຫ້ແກ່ຜູ້ບໍລິຫານ, ວິຊາການ ຂອງກົມກວດກາ ແລະ ຄະນະກວດກາ ເພື່ອນຳໄປໃຊ້ເປັນແນວທາງການປັບປຸງ ໃນການປະຕິບັດວຽກງານກວດກາ ກະຊວງສຶກສາທິການ ແລະ ກິລາ ໃນຕໍ່ໜ້າ.

ຈຸດປະສົງຂອງການຄົ້ນຄວ້າ ເພື່ອ 1) ສຶກສາສະພາບການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ. 2) ສຶກສາຫາຂໍ້ສະເໜີແນະແນວທາງການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ແລະ 3) ເພື່ອປະເມີນ ຂໍ້ສະເໜີແນະຕໍ່ການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ.

**2. ອຸປະກອນ ແລະ ວິທີການ**

ການຄົ້ນຄວ້າໃນຄັ້ງນີ້ ເປັນການຄົ້ນຄວ້າກ່ຽວກັບຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານກວດກາ ຂອງກະຊວງສຶກສາທິການ ແລະ ກິລາ. ການອອກແບບການຄົ້ນຄວ້າເປັນການຄົ້ນຄວ້າແບບປະສົມປະສານ (Mixed Methods Research) ໂດຍມີວິທີການດຳເນີນການຄົ້ນຄວ້າເປັນ 3 ໄລຍະດັ່ງນີ້:

2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍຜູ້ໃຫ້ຂໍ້ມູນກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ຜູ້ຄົ້ນຄວ້າໄດ້ກຳນົດເອົາຜູ້ບໍລິຫານ ແລະ ພະນັກງານວິຊາການ ຈາກບັນດາຫ້ອງການ, ກົມ , ສະຖາບັນ, ສູນ, ວິທະຍາໄລ, ມະຫາວິທະຍາໄລແຫ່ງຊາດ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ແລະ ນະຄອນຫຼວງວຽງຈັນ ລວມຈຳນວນ 128 ທ່ານ ເຊິ່ງມີຜູ້ບໍລິຫານ ຈຳນວນ 85 ທ່ານ ແລະ ພະນັກງານວິຊາການ ຈຳນວນ 43 ທ່ານ

ກຸ່ມເປົ້າໝາຍທີ່ໃຊ້ເຂົ້າໃນການສຳພາດຫາການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ຜູ້ຄົ້ນຄວ້າໄດ້ກຳນົດເອົາຈຳນວນ 10 ທ່ານ ຄື: ຄະນະກວດກາພັກກະຊວງ 2 ທ່ານ, ຫົວໜ້າ ແລະ ຮອງຫົວໜ້າກົມກວດກາ 2 ທ່ານ, ຫ້ອງການຈັດຕັ້ງ ແລະ ກວດກາ ມະຫາວິທະຍາໄລແຫ່ງຊາດ 2 ທ່ານ, ພະແນກສຶກສາທິການ ແລະ ກິລານະຄອນຫຼວງວຽງຈັນ 2 ທ່ານ (ຫົວໜ້າຂະແໜງກວດກາປະເມີນຜົນ ແລະ ປະກັນຄຸນນະພາບ ແລະ ຫົວໜ້າຂະແໜງຈັດຕັ້ງ), ຫ້ອງການສຶກສາທິການ ແລະ ກິລາເມືອງໄຊເສດຖາ 2 ທ່ານ (ຫົວໜ້າໜ່

ວຍງານກວດກາປະເມີນຜົນ ແລະ ປະກັນຄຸນນະພາບ ແລະ ຫົວໜ້າໜ່ວຍງານຈັດຕັ້ງ).

ກຸ່ມເປົ້າໝາຍທີ່ໃຊ້ເຂົ້າໃນການປະເມີນຄວາມຄິດເຫັນຕໍ່ຂໍ້ສະເໜີແນະໃນການປະຕິບັດວຽກງານ ກວດກາ ກະຊວງສຶກສາທິການ ແລະ ກິລາ ລວມທັງໝົດ 12 ທ່ານຄື: ຄະນະກວດກາພັກກະຊວງ 3 ທ່ານ, ຮອງຫົວໜ້າກົມກວດກາ 2 ທ່ານ, ຫົວໜ້າກົມຈັດຕັ້ງ 1 ທ່ານ, ຫ້ອງການຈັດຕັ້ງ ແລະ ກວດກາ ມະຫາວິທະຍາໄລແຫ່ງຊາດ 2 ທ່ານ, ຫົວໜ້າພະແນກສຶກສາທິການ ແລະ ກິລານະຄອນຫຼວງວຽງຈັນ 1 ທ່ານ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງໄຊເສດຖາ, ເມືອງໄຊທານີ ແລະ ເມືອງສີໂຄດຕະບອງ 3 ທ່ານ.

2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ຮວບຮວມຂໍ້ມູນໄລຍະທີ 1 ເປັນແບບສອບຖາມ (Questionnaires) ໂດຍແບ່ງເປັນ 2 ຕອນດັ່ງນີ້: ຕອນທີ 1: ສອບຖາມ ກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຊຶ່ງມີລັກສະນະກວດສອບ ລາຍການ (Checklist) ປະກອບດ້ວຍ: ຕຳແໜ່ງ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ, ຕອນທີ 2: ສອບຖາມກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາລັກສະນະແບບສອບຖາມ ເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ ຂອງສີສະອາດ (2011, ໜ້າ. 121). ນຳແບບສອບຖາມສະເໜີຕໍ່ຜູ້ຊ່ຽວຊານຈຳນວນ 05 ທ່ານ ກວດສອບຄວາມຖືກຕ້ອງທາງດ້ານໂຄງສ້າງ ແລະ ເນື້ອໃນເພື່ອຊອກຫາຄ່າດັດສະນີຄວາມສອດຄ່ອງ ລະຫວ່າງຂໍ້ຄຳຖາມກັບນິຍາມສັບສະເພາະ (IOC: Index of Item Objective Congruence). ຈາກນັ້ນ, ນຳມາຄິດໄລ່ຫາຄ່າຄວາມສອດຄ່ອງຂອງຄຳຖາມໄດ້ຂໍ້ຄຳຖາມທີ່ມີຄ່າຄວາມສອດຄ່ອງ (IOC) ເທົ່າກັບ 1.00 ທຸກຂໍ້. ນຳແບບສອບຖາມໄປທົດລອງໃຊ້ (Try Out) ກັບຜູ້ບໍລິຫານ ແລະ ວິຊາການຂອງພາຍໃນກະຊວງສຶກສາ ທິການ ແລະ ກິລາ ທີ່ບໍ່ແມ່ນກຸ່ມເປົ້າໝາຍແບບເຈາະຈົງ (Perposive Sampling) ຈຳນວນ 30 ທ່ານ ເພື່ອຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມໂດຍໃຊ້ວິທີການຫາຄ່າສຳປະສິດອານຟາ (Alpha Coefficient) ຕາມວິທີຂອງຄຣອນບາກ (Cronbach, 1990, p. 204) ໄດ້ຄ່າລະດັບຄວາມເຊື່ອໝັ້ນຂອງແບບສອບຖາມທີ່ 0.966.

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ ໄລຍະທີ 2 ເປັນແບບສຳພາດທີ່ມີໂຄງສ້າງ (ເປັນລັກສະນະຄຳຖາມປາຍເປີດ) ໝາຍຄວາມວ່າໃຫ້ຜູ້ຕອບໄດ້ຕອບຕາມຄວາມຄິດເຫັນຕາມສະພາບເປັນຈິງທີ່ເຄີຍປະຕິບັດວຽກງານກວດກາຜ່ານມາ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ ໄລຍະທີ 3 ເປັນແບບປະເມີນດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງຂໍ້ສະເໜີແນະໃນການປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ເຊິ່ງມີລັກສະນະເປັນແບບມາດຕາສ່ວນປະມານຄ່າ (Rating scale) 5 ລະດັບຂອງ ສີສະອາດ (2003) ເຊິ່ງມີເກນໃຫ້ຄະແນນ ດັ່ງນີ້:

ຄະແນນ 5 ໝາຍເຖິງ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຢູ່ໃນລະດັບຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຢູ່ໃນລະດັບຫຼາຍ

ຄະແນນ 3 ໝາຍເຖິງ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຢູ່ໃນລະດັບປານກາງ

ຄະແນນ 2 ໝາຍເຖິງ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຢູ່ໃນລະດັບໜ້ອຍ

ຄະແນນ 1 ໝາຍເຖິງ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຢູ່ໃນລະດັບໜ້ອຍທີ່ສຸດ

2.3 ວິທີການເກັບກຳຂໍ້ມູນ

ແຈກຢາຍແບບສອບຖາມໃຫ້ເປົ້າໝາຍ, ແນະນຳວິທີຕອບແບບສອບຖາມ. ຈາກນັ້ນ, ນັດໝາຍວັນເວລາເກັບແບບສອບຖາມຄືນມາກວດສອບຄວາມຖືກຕ້ອງຂອງການຕອບແບບສອບຖາມ ເພື່ອນຳໄປໃຊ້ໃນການວິເຄາະຂໍ້ມູນຕໍ່ໄປ. ນຳເອົາຜົນການວິເຄາະຈາກໄລຍະທີ 1 ໂດຍເລືອກເອົາຂໍ້ທີ່ມີຄ່າສະເລ່ຍ ($\mu$) ຕ່ຳກວ່າຄ່າສະເລ່ຍລວມຂອງແຕ່ລະດ້ານມາກຳນົດເປັນຮ່າງແບບສຳພາດ, ສ້າງຂໍ້ຄຳຖາມແບບສຳພາດ ແລ້ວນຳໄປສຳພາດກັບເປົ້າໝາຍເພື່ອເກັບກຳຂໍ້ມູນຄວາມຄິດເຫັນ ແລະ ຂໍ້ສະເໜີແນະເພີ່ມເຕີມຕາມສະພາບຈິງໂດຍການຈົດບັນທຶກ. ນຳເອົາຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານກວດກາ ຈາກຜົນທີ່ໄດ້ໄລຍະທີ 2 ມາສ້າງເປັນຮ່າງແບບປະເມີນ ໂດຍການປະຍຸກໃຊ້ຕາມທິດສະດີຂອງ (Stufflebleam, 1975) ຊຶ່ງການຄົ້ນຄວ້າຄັ້ງນີ້ ໄດ້ກຳນົດການປະເມີນແນວທາງໃນ 2 ດ້ານ ຄື: (1) ມາດຕະຖານຄວາມເໝາະສົມ, (2) ຄວາມເປັນໄປໄດ້ ຊຶ່ງແບບປະເມີນລັກສະນະແບບສອບຖາມມີລັກສະນະເປັນມາດຕາສ່ວນປະມານຄ່າ (Rating scale) 5 ລະດັບ.

**2.4 ການວິເຄາະຂໍ້ມູນ**

ການວິເຄາະຂໍ້ມູນ: ຜູ້ຄົ້ນຄວ້າໄດ້ນຳເອົາຂໍ້ມູນມາກວດສອບຄວາມຖືກຕ້ອງ ຂອງແບບສອບຖາມແລ້ວນຳມາວິເຄາະທາງສະຖິຕິດ້ວຍຄອມພິວເຕີໂດຍການນຳໃຊ້ໂປຼແກຼມສຳເລັດຮູບທາງສັງຄົມສາດ (Statistical Package for Social Siences: SPSS) ໂດຍນຳໃຊ້ສະຖິຕິພື້ນຖານເພື່ອຫາຄ່າຄວາມຖີ່ (Frequencies), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ ($\mu$) ແລະ ຄ່າຜັນປ່ຽນມາດຕະຖານ ($\sigma$). ການວິເຄາະຂໍ້ມູນທີ່ໄດ້ຈາກການສຳພາດແບບມີໂຄງສ້າງ ຕໍ່ຂໍ້ສະເໜີແນະໃນການປະຕິບັດວຽກງານກວດກາແມ່ນໄດ້ສະຫຼຸບ, ສັງລວມ ແລະ ຈັດລຽງເນື້ອໃນຈາກການສຳພາດ ເພື່ອນຳມາສ້າງເປັນແນວທາງພັດທະນາສະບັບສົມບູນ ແລ້ວນຳໄປປະເມີນຕໍ່ໄປ.

**3. ຜົນໄດ້ຮັບ**

3.1 ໄລຍະທີ 1: ສະພາບການຈັດຕັ້ງປະຕິບັດວຽກງານກວດກາ ກະຊວງສຶກສາ ທິການ ແລະ ກິລາ.ສະພາບການຈັດຕັ້ງປະຕິບັດວຽກງານກວດກາໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບຫຼາຍ: ດ້ານທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ ແມ່ນດ້ານວຽກງານການຕິດຕາມ ແລະ ປະເມີນຜົນ, ຮອງລົງມາແມ່ນດ້ານການກວດກາພັກ, ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ແລະ ຜົນການວິເຄາະຂໍ້ມູນສາມາດແຍກເປັນແຕ່ລະດ້ານດັ່ງນີ້:

ດ້ານການກວດກາພັກ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 2

ກວດກາການຈັດຕັ້ງປະຕິບັດມະຕິ, ຄຳສັ່ງຂອງຄະນະພັກຂັ້ນເທິງ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 6 ກວດກາຂະບວນການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງໜັກແໜ້ນ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 8 ການກວດກາການຕົກລົງວິໄນພາຍໃນພັກ ຢູ່ໃນລະດັບປານກາງ.

ດ້ານການກວດກາລັດ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ຂໍ້ທີ 1 ການກວດກາການປະຕິບັດພາລະບົດບາດໜ້າທີ່ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ພະນັກງານວິຊາການ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 5 ການຕິດຕາມ ຊຸກຍູ້ ການຈັດຕັ້ງປະຕິບັດແກ້ໄຂຜົນການກວດສອບຂອງອົງການກວດສອບແຫ່ງລັດ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 4 ການຕິດຕາມການປະຕິບັດຜົນການກວດກາ ຢູ່ໃນລະດັບຫຼາຍ.

ດ້ານການຄົ້ນຄວ້າສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບວຽກງານກວດກາ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 5 ການນຳໃຊ້ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານກວດກາເຂົ້າໃນການປະຕິບັດວຽກງານຕົວຈິງຂອງຂະແໜງການຕົນ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 3 ການເຜີຍແຜ່ນິຕິກຳວຽກງານກວດກາໃຫ້ພະນັກງານເປັນປົກກະຕິດ້ວຍຫຼາຍຮູບການຫຼາຍຊ່ອງທາງ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 1 ການຄົ້ນຄວ້າສ້າງນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານກວດກາ ຢູ່ໃນລະດັບຫຼາຍ.

ດ້ານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 1 ການຈຳກັດ ແລະ ການປ້ອງກັນບໍ່ໃຫ້ເກີດການສໍ້ລາດບັງຫຼວງ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 5 ການແຈ້ງຊັບສິນຂອງພະນັກງານ-ລັດຖະກອນ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 6 ການຄົ້ນຄວ້າລົງວິໄນຕໍ່ຜູ້ລະເມີດກົດໝາຍວ່າດ້ວຍຕ້ານການສໍ້ລາດບັງຫຼວງ ຢູ່ໃນລະດັບປານກາງ.

ດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 6 ການເກັບຮັກສາຂໍ້ມູນກ່ຽວກັບວຽກງານຄຳຮ້ອງ-ຄຳສະເໜີ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 3 ການອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ສິດຮ້ອງທຸກຕໍ່ພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 4 ແຈ້ງການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂໃຫ້ຜູ້ຮ້ອງທຸກ, ຜູ້ຖືກຮ້ອງທຸກ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນລາຍລັກອັກສອນເພື່ອຈັດຕັ້ງປະຕິບັດ ຢູ່ໃນລະດັບປານກາງ.

ດ້ານການຕິດຕາມ ແລະ ປະເມີນຜົນ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 1 ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງ ສຶກສາທິການ ແລະ ກິລາ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 3 ການຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດປະຈຳປີ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 6 ສ້າງ ແລະ ປັບປຸງນິຕິກຳ, ເຄື່ອງມື, ຄູ່ມື, ເອກະສານວິຊາການຮັບໃຊ້ວຽກງານ ຕິດຕາມ ແລະ ປະເມີນຜົນ ແລະ ການທົບທວນຮ່ວມກັບຄູ່ຮ່ວມພັດທະນາຕາມແຕ່ລະຂະແໜງການຍ່ອຍຕ່າງໆ ຢູ່ໃນລະດັບຫຼາຍ.

ດ້ານການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 1 ການກໍ່ສ້າງ ແລະ ປັບປຸງໂຄງປະກອບກົງຈັກການຈັດຕັ້ງຂອງຕົນໃຫ້ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນຂໍ້ທີ 3 ການກຳນົດແຜນບຳລຸງສ້າງພະນັກງານກວດກາຕາມພາລະບົດບາດໜ້າທີ່ຂອງຂະແໜງການຕົນ ຢູ່ໃນລະດັບຫຼາຍ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 6 ການປະຕິບັດນະໂຍບາຍດ້ານຕ່າງໆທີ່ຈຳເປັນໃຫ້ແກ່ພະນັກງານກວດກາໄດ້ເຄື່ອນໄຫວປະຕິບັດໜ້າທີ່ ຢູ່ໃນລະດັບຫຼາຍ.

3.2 ໄລຍະທີ 2: ຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານກວດກາກະຊວງສຶກສາທິການ ແລະ ກິລາ.

ດ້ານການກວດກາພັກ ຄວນມີການກຳນົດແຜນການກວດກາໃຫ້ມີຄວາມຊັດເຈນ ແລະ ດຳເນີນການກວດກາຢ່າງເປັນປົກກະຕິ; ມີການລາຍງານ ແລະ ປະຕິບັດວິໄນຕາມລະບຽບການ ຢ່າງເຂັ້ມງວດຕໍ່ຜູ້ທີ່ລະເມີດມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ ແລະ ມີກົນໄກທີ່ດີໃນການປະສານງານລະຫວ່າງຜູ້ກວດກາ ແລະ ຄະນະວິໄນ ເພື່ອຕິດຕາມການຕົກລົງວິໄນພາຍໃນພັກ.

ດ້ານການກວດກາລັດ ຄວນເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກວດກາລັດ, ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບການກວດກາລັດ; ມີແຜນການກວດກາການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງບັນດາກົມກອງທີ່ຂຶ້ນກັບຂະແໜງການຕົນຢ່າງເປັນປົກກະຕິ; ຄວນສ້າງຄວາມເຂັ້ມແຂງດ້ານການເງິນ-ການບັນຊີໃຫ້ພະນັກງານກວດກາ; ຈັດຝຶກອົບຮົມວິທີການກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີໃຫ້ພະນັກງານກວດກາແຕ່ຂັ້ນສູນກາງຮອດຂັ້ນແຂວງ; ຫັນເປັນລະບົບດີຈີຕອນ ໃນການຕິດຕາມງົບປະມານ ແລະ ເງິນຊ່ວຍເຫຼືອຕ່າງໆພາຍໃນຂະແໜງການສຶກສາ ແລະ ສ້າງລະບົບຖານຂໍ້ມູນເພື່ອຕິດຕາມຂໍ້ແນະນຳຫຼັງການກວດກາ, ກຳນົດເວລາທີ່ຊັດເຈນໃຫ້ພາກສ່ວນທີ່ຖືກກວດກາຕ້ອງແກ້ໄຂ ແລະ ລາຍງານຄືນ.

ດ້ານການຄົ້ນຄວ້າສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບວຽກງານກວດກາ ຄວນເປີດໂອກາດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງ ແລະ ປັບປຸງນິຕິກຳວຽກງານກວດກາ; ການຄົ້ນຄວ້າສ້າງ ຫຼື ປັບປຸງນິຕິກຳວຽກງານກວດກາຈະຕ້ອງແທດເໝາະ ແລະ ສອດຄ່ອງກັບພາລະບົດບາດຂອງຂະແໜງການຕົນ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ທີ່ໄດ້ປະກາດໃຊ້ແລ້ວ ແລະ ມີ

ລະບົບ ຫຼື ກົນໄກໃນການປະເມີນຄວາມຮັບຮູ້, ຄວາມເຂົ້າໃຈຂອງພະນັກງານຕໍ່ນິຕິກຳເປັນແຕ່ລະໄລຍະ.

ດ້ານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຄວນມີການດຳເນີນຄະດີ ແລະ ປະຕິບັດວິໄນຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດກ່ຽວກັບການສໍ້ລາດບັງຫຼວງທຸກຮູບແບບ; ມີກົນໄກທີ່ສາມາດອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ມີຈຸດປະສົງຈະແຈ້ງຂໍ້ມູນກ່ຽວກັບການສໍ້ລາດບັງຫຼວງ ແລະ ກຳນົດເວລາ, ສ້າງຄູ່ມື ແລະ ເກນການລົງວິໄນທີ່ເປັນມາດຕະຖານ, ເພີ່ມທະວີຄວາມເປັນເອກະລາດໃຫ້ຄະນະກຳມະການວິໄນ, ສ້າງກົນໄກປະສານງານທີ່ມີຄວາມຄ່ອງຕົວ ແລະ ປະກາດຜົນການລົງວິໄນຕາມຄວາມເໝາະສົມ.

ດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຄວນປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນໃຫ້ອົງການທີ່ກ່ຽວຂ້ອງຕາມຄວາມເໝາະສົມ; ປັບປຸງຊ່ອງທາງໃນການຮັບຄຳຮ້ອງ-ຄຳສະເໜີ ທີ່ສາມາດຮັກສາຄວາມລັບຂອງຜູ້ຮ້ອງຮຽນໄດ້; ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີຄວນຮັບປະກັນດ້ານເນື້ອໃນ ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ເປັນທຳ; ເອົາໃຈໃສ່ໃນການລົງເກັບກຳຂໍ້ມູນຕາມຄຳຮ້ອງ-ຄຳສະເໜີ ໃຫ້ທັນກັບສະພາບການ; ມີການແຈ້ງຜົນການແກ້ໄຂຄຳຮ້ອງຄຳສະເໜີເປັນລາຍລັກອັກສອນໃຫ້ການຈັດຕັ້ງພັກລັດ, ສະມາຊິກພັກ, ພະນັກງານ ແລະ ບຸກຄົນ ທີ່ຖືກຮ້ອງຟ້ອງ ວ່ອງໄວຂຶ້ນ; ກຳນົດເປັນນິຕິກຳ ຫຼື ລະບຽບການໃຫ້ພາກສ່ວນຮັບຜິດຊອບແຈ້ງຕອບຜົນການພິຈາລະນາຄຳຮ້ອງ-ຄຳສະເໜີ, ຕ້ອງມີເນື້ອໃນທີ່ຊັດເຈນ, ກຳນົດເວລາ ແລະ ກົນໄກການຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ມີລະບົບຕິດຕາມ ແລະ ລາຍງານຜົນການແກ້ໄຂຄຳຮ້ອງ-ຄຳສະເໜີ ໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ ແລະ ມີລະບົບຖານຂໍ້ມູນເພື່ອຕິດຕາມແບບອັດຕະໂນມັດ, ສ້າງກົນໄກແບບບັງຄັບໃນການລາຍງານຕາມກົດໝາຍ, ສ້າງໜ່ວຍງານຕິດຕາມຜົນໂດຍສະເພາະ ແລະ ເປີດຊ່ອງທາງໃຫ້ຜູ້ຮ້ອງຮຽນ ມີສ່ວນຮ່ວມໃນການຕິດຕາມ.

ດ້ານການຕິດຕາມ ແລະ ປະເມີນຜົນ ຄວນມີການກຳນົດໂຄງຮ່າງການຈັດ ຕັ້ງ ແລະ ພາລະບົດບາດໃຫ້ຊັດເຈນໃນທຸກຂັ້ນ, ເພື່ອຍົກສູງຂີດຄວາມສາມາດທາງດ້ານວິຊາສະເພາະຢ່າງເປັນລະບົບ ແລະ ສະໜອງງົບປະມານ ແລະ ພາຫະນະ, ອຸປະກອນເຕັກໂນໂລຊີ ໃຫ້ພຽງພໍກັບການເຄື່ອນໄຫວວຽກງານຕົວຈິງ; ເພີ່ມທະວີການຮ່ວມມືກັບຄູ່ຮ່ວມພັດທະນາຕ່າງໆ ໃນການພັດທະນາຄູ່ມືການຕິດຕາມ ແລະ ປະເມີນຜົນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ທີ່ເປັນເອກະພາບກັນ; ມີການປັບປຸງນິຕິກຳ ແລະ ກົນໄກກ່ຽວກັບລະບົບຕິດຕາມ ແລະ ປະເມີນຜົນໃຫ້ສອດຄ່ອງ ໃນແຕ່ລະໄລຍະ; ການສ້າງ ແລະ ປັບປຸງນິຕິກຳ, ເຄື່ອງມື, ຄູ່ມື, ເອກະສານວິຊາການຮັບໃຊ້ວຽກງານ ຕິດຕາມ ແລະ ປະເມີນຜົນ ຄວນມີແຜນການລະອຽດວ່າຈະສ້າງນິຕິກຳ; ມີກົນໄກການທົບທວນ ແລະ ປັບປຸງຮ່ວມກັນ, ທັງນິຕິກຳ ແລະ ຄູ່ມື ໃຫ້ເປັນ ແບບດີຈິຕອນ, ມີການທົດລອງນຳໃຊ້ກ່ອນການປະກາດໃຊ້ຕົວຈິງ, ພ້ອມທັງຈັດສັນງົບປະມານໃນການເຜີຍແຜ່ ແລະ ຝຶກອົບຮົມ.

ດ້ານການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ ຄວນມີການຄົ້ນຄວ້າ ປັບປຸງກົງຈັກຢ່າງມີຈຸດສຸມ ແລະ ປັບປຸງໂຄງປະກອບບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ, ມີຄວາມເປັນເອກະພາບ, ຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ເໝາະສົມກັບສະພາບເງື່ອນໄຂຕົວຈິງ; ປະກອບພະນັກງານໃຫ້ພຽງພໍກັບຄວາມຕ້ອງການຕົວຈິງ ບໍ່ແມ່ນພຽງແຕ່ການຂໍເພີ່ມຕົວເລກລັດຖະກອນ ແຕ່ຕ້ອງເນັ້ນໃສ່ການຈັດສັນຢ່າງມີຍຸດທະສາດ; ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃຫ້ແກ່ພະນັກງານກວດກາຢ່າງເປັນລະບົບ ດ້ວຍຫຼາຍຮູບເຊັ່ນ: ການຈັດຝຶກອົບຮົມ, ແລກປ່ຽນຖອດຖອນບົດຮຽນ ແລະ ບຳລຸງກໍ່ສ້າງພະນັກງານ ກວດກາ ໃນໄລຍະສັ້ນ, ໄລຍະຍາວທັງຢູ່ພາຍໃນ ແລະ ຕ່າງປະເທດ; ເປີດໂອກາດໃຫ້ພະນັກງານມີສ່ວນຮ່ວມໃນທຸກຂັ້ນຕອນ ຕັ້ງແຕ່ວາງແຜນ, ເກັບກຳຂໍ້ມູນ, ວິເຄາະຂໍ້ບັນຫາ ໄປຈົນເຖິງການສະຫຼຸບຜົນ ເພື່ອໃຫ້ເຂົ້າໃຈວຽກງານຢ່າງຮອບດ້ານ; ມີນະໂຍບາຍທີ່ເໝາະສົມ ຍ້ອນເປັນວຽກງານທີ່ມີຄວາມສ່ຽງ ແລະ ຄວາມກົດດັນສູງ; ມີການຍ້ອງຍໍຊົມເຊີຍ ແລະ ເລື່ອນຂັ້ນ-ຕຳແໜ່ງຢ່າງເໝາະສົມໃຫ້ແກ່ບຸກຄົນທີ່ມີຜົນງານດີເດັ່ນ ແລະ ມີກົນໄກການປົກປ້ອງຄວາມປອດໄພທາງດ້ານກົດໝາຍໃຫ້ແກ່ພະນັກງານກວດກາໃນເວລາປະຕິບັດໜ້າທີ່.

3.3 ໄລຍະທີ 3: ຜົນການປະເມີນຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານການກວດກາຂອງກະຊວງສຶກສາທິການ ແລະ ກິລາ

ຜົນການປະເມີນຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານກວດກາ ກະຊວງສຶກສາທິການ ແລະ ກິລາ ມີຄວາມເໝາະສົມ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະດ້ານເຫັນວ່າທຸກໆດ້ານມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ມີຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະດ້ານເຫັນວ່າທຸກໆດ້ານແມ່ນມີຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍ.

1. ດ້ານການກວດກາພັກ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ຢູ່ໃນລະດັບຫຼາຍ.

2. ດ້ານການກວດກາລັດ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບປານກາງຫາຫຼາຍ.

3. ດ້ານການຄົ້ນຄວ້າສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳກ່ຽວກັບວຽກງານກວດກາ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບປານກາງຫາຫຼາຍ.

4. ດ້ານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍ

ຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບປານກາງຫາຫຼາຍ.

5. ດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ.

6. ດ້ານວຽກງານການຕິດຕາມ ແລະ ປະເມີນຜົນ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບປານກາງຫາຫຼາຍ.

7. ດ້ານການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ ເຫັນວ່າຜົນການປະເມີນ ດ້ານຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ແຕ່ລະຂໍ້ມີຄວາມເໝາະສົມຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ ແລະ ດ້ານຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ມີຄວາມເປັນໄປໄດ້ ຢູ່ໃນລະດັບປານກາງຫາຫຼາຍ.

**4. ວິພາກຜົນ**

4.1 ສະພາບການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ

ຈາກການຄົ້ນຄວ້າກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານກວດກາ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍລວມຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ກະຊວງສຶກສາທິການ ແລະ ກິລາ ໄດ້ມີການຈັດຕັ້ງປະຕິບັດວຽກງານກວດກາ ໂດຍສະເພາະ ວຽກງານການຕິດຕາມ ແລະ ປະເມີນຜົນ, ວຽກງານການກວດກາພັກ, ການກວດກາລັດ, ການຄົ້ນຄວ້າ, ປັບປຸງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ ແລະ ວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຊຶ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ແກ້ວຄຳດີ (2021) ໄດ້ສຶກສາກ່ຽວກັບຄວາມເພິ່ງພໍໃຈຂອງພະນັກງານຕໍ່ກັບວຽກງານກວດກາ ທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຜົນການຄົ້ນຄວ້າພົບວ່າ ສະພາບການປະຕິບັດວຽກງານກວດກາ ແລະ ຄວາມເພິ່ງພໍໃຈຂອງພະນັກງານຕໍ່ກັບວຽກງານກວດກາ ໂດຍລວມຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງຊະຫຍອງເອກ (2025) ທີ່ໄດ້ສຶກສາກ່ຽວກັບການມີສ່ວນຮ່ວມຂອງພະນັກງານ ໃນການປະຕິບັດວຽກງານກວດກາ ຂອງຄະນະເລຂາທິການສະພາແຫ່ງຊາດ ຜົນການຄົ້ນຄວ້າພົບວ່າ ສະພາບການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາຂອງຄະນະເລຂາທິການສະພາແຫ່ງຊາດ ໂດຍລວມຢູ່ໃນລະດັບຫຼາຍ. ນອກນັ້ນ, ຍັງສອດຄ່ອງກັບຜົນຄົ້ນຄວ້າຂອງດຳຣົງ (2021) ທີ່ໄດ້ສຶກສາການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາຢູ່ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຜົນການຄົ້ນຄວ້າ ພົບວ່າ ລະດັບການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາ ໂດຍລວມຢູ່ໃນລະດັບຫຼາຍ.

4.2 ຂໍ້ສະເໜີແນະແນວທາງການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ

ຂໍ້ສະເໜີແນະໃນການຈັດຕັ້ງປະຕິບັດວຽກງານກວດກາ ກະຊວງສຶກສາທິການ ແລະ ກິລາ ຄວນມີການກຳນົດແຜນການກວດກາໃຫ້ມີຄວາມຊັດເຈນ ແລະ ດຳເນີນການກວດກາຢ່າງເປັນປົກກະຕິ; ເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກວດກາລັດ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບການກວດກາລັດ, ເປີດໂອກາດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງ ແລະ ປັບປຸງນິຕິກຳວຽກງານກວດກາ; ການຄົ້ນຄວ້າສ້າງ ຫຼື ປັບປຸງນິຕິກຳວຽກງານກວດກາຈະຕ້ອງແທດເໝາະ ແລະ ສອດຄ່ອງກັບພາລະບົດບາດຂອງຂະແໜງການຕົນ, ມີການດຳເນີນຄະດີ ແລະ ປະຕິບັດວິໄນຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດກ່ຽວກັບການສໍ້ລາດບັງຫຼວງທຸກຮູບແບບ; ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີຄວນຮັບປະກັນດ້ານເນື້ອໃນຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ເປັນທຳ, ມີລະບົບຕິດຕາມ ແລະ ລາຍງານຜົນການແກ້ໄຂຄຳຮ້ອງ-ຄຳສະເໜີໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ ແລະ ມີລະບົບຖານຂໍ້ມູນເພື່ອຕິດຕາມ ແລະ ປະເມີນຜົນແບບອັດຕະໂນມັດ; ຄົ້ນຄວ້າ ປັບປຸງກົງຈັກຢ່າງມີຈຸດສຸມ ແລະ ປັບປຸງໂຄງປະກອບບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ ແລະ ເປີດໂອກາດໃຫ້ພະນັກງານມີສ່ວນຮ່ວມໃນທຸກຂັ້ນຕອນ ຕັ້ງແຕ່ວາງແຜນ, ເກັບກຳຂໍ້ມູນ, ວິເຄາະຂໍ້ບັນຫາ ໄປຈົນເຖິງການສະຫຼຸບຜົນ ເພື່ອໃຫ້ເຂົ້າໃຈວຽກງານຢ່າງຮອບດ້ານ ຊຶ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງເຮົ້າສຸກຂັນສາ (2024) ທີ່ວ່າ ປັບປຸງແບບແຜນວິທີເຮັດວຽກ, ກົນໄກການການຕິດຕາມ ກວດກາ ຢ່າງມີຈຸດສຸມ ແລະ ເປົ້າໝາຍຂອງການກວດກາໃຫ້ພະນັກງານ, ສະມາຊິກພັກເຂົ້າໃຈຢ່າງເປັນລະບົບ; ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ມີຄວາມໜັກແໜ້ນຊຶມຊັ້ນກຳມະກອນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງວົງວິໄນ (2021) ທີ່ວ່າ ເພີ່ມທະວີການຄົ້ນຄວ້າແກ້ໄຂຄຳຮ້ອງ-ຄຳສະເໜີ ຢ່າງທັນການ, ການກວດກາຕ້ອງຮັບປະກັນຄຸນນະພາບ ບົນພື້ນຖານລະບຽບ, ກົດໝາຍທີ່ໄດ້ກຳນົດໄວ້, ປຸກລະດົມໃຫ້ສັງຄົມເຂົ້າໃຈຕໍ່ວຽກງານກວດກາ ແລະ ມີສ່ວນຮ່ວມໃນການກວດກາຫຼາຍຂຶ້ນ. ນອກຈາກນັ້ນຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງພົມທະວົງ (2024) ໄດ້ຄົ້ນຄວ້າກ່ຽວກັບການຍົກສູງຄຸນນະພາບວຽກງານກວດກາພັກ ຢູ່ ສປປ ລາວ ຜົນການຄົ້ນຄວ້າພົບວ່າ ການຍົກສູງຄຸນນະພາບວຽກງານກວດກາພັກ ຢູ່ ສປປ ລາວ ຕ້ອງໄດ້ເອົາໃຈໃສ່ເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະພັກ, ຄະນະນຳ ຕໍ່ວຽກງານກວດກາພັກຕິດພັນກັບການຈັດຕັ້ງເຊື່ອມຊຶມແນວທາງຂອງພັກ, ແຜນນະໂຍບາຍຂອງລັດ, ເພີ່ມທະວີຄວາມຮັບຜິດຊອບຂອງຄະນະກວດກາພັກ, ພະນັກງານກວດກາຕໍ່ວຽກງານກວດກາໃນການຕິດຕາມ, ກວດກາປົກກະຕິ ແລະ ປະເມີນການເຄື່ອນໄຫວຢ່າງເປັນປະຈຳ ແລະ ປັບປຸງການຈັດຕັ້ງກວດກາ ແລະ

ບຸກຄະລາກອນໃຫ້ມີຄຸນນະພາບເພື່ອຮັບປະກັນການເຄື່ອນໄຫວວຽກງານກວດກາພັກໃຫ້ວ່ອງໄວທັນການ ແລະ ມີຄວາມໂປ່ງໃສ.

4.3 ການປະເມີນຂໍ້ສະເໜີແນະ ການຈັດຕັ້ງປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ

ການປະເມີນຂໍ້ສະເໜີແນະໃນການປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ໂດຍລວມ ມີຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ໃນການຈັດຕັ້ງປະຕິບັດວຽກງານກວດກາຄວນມີການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ທີ່ຮັບປະກັນເນື້ອໃນຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ເປັນທຳ, ມີການກວດກາລັດໂດຍການສ້າງຄວາມເຂັ້ມແຂງດ້ານການເງິນ-ການບັນຊີໃຫ້ພະນັກງານກວດກາ ແລະ ສ້າງລະບົບຖານຂໍ້ມູນ ເພື່ອຕິດຕາມຂໍ້ແນະນຳຫຼັງການກວດກາ, ມີການກວດກາພັກໂດຍມີການກຳນົດແຜນ ການກວດກາໃຫ້ມີຄວາມຊັດເຈນ ແລະ ດຳເນີນການກວດກາຢ່າງເປັນປົກກະຕິ, ມີການລາຍງານ ແລະ ປະຕິບັດວິໄນຕາມລະບຽບການ ຢ່າງເຂັ້ມງວດຕໍ່ຜູ້ທີ່ລະເມີດມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ; ມີການຄົ້ນຄວ້າ, ປັບປຸງ ແລະ ເຜີຍແຜ່ນິຕິກຳກ່ຽວກັບວຽກງານກວດກາ ໂດຍເປີດໂອກາດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງ ແລະ ປັບປຸງນິຕິກຳວຽກງານກວດກາ ແລະ ສ້າງ ຫຼື ປັບປຸງນິຕິກຳວຽກງານກວດກາຈະຕ້ອງແທດເໝາະ ແລະ ສອດຄ່ອງກັບພາລະບົດບາດຂອງຂະແໜງການຕົນ, ມີການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ, ມີການຄົ້ນຄວ້າ ປັບປຸງກົງຈັກຢ່າງມີຈຸດສຸມ ແລະ ປັບປຸງໂຄງປະກອບບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ, ມີຄວາມເປັນເອກະພາບ, ຖືກຕ້ອງຕາມກົດລະບຽບຂອງພັກ ຊຶ່ງສອດຄ່ອງກັບ ຊຶ່ງສອດຄ່ອງກັບເອກະສານຝຶກອົບຮົມວຽກງານກວດກາພັກ ແລະ ກວດກາລັດ ຂອງຄະນະກວດກາສູນກາງພັກ (2018) ທີ່ວ່າ ການກວດກາ ແມ່ນການເຄື່ອນໄຫວທີ່ມີສະຕິຂອງການຈັດຕັ້ງ ແລະ ສະມາຊິກພັກ, ເປັນເຄື່ອງມືທີ່ສຳຄັນອັນໜຶ່ງ, ເປັນຫຼັກການນຳພາຂອງພັກ ແລະ ນຳໜ້າຂອງພັກ, ເປັນວິທີອັນໜຶ່ງທີ່ມີປະສິດທິພາບ ເພື່ອແກ້ໄຂບັນດາບັນຫາພາຍໃນພັກ ແລະ ມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງ ໃຫ້ແກ່ພະນັກງານນຳພາ ແລະ ຄຸ້ມຄອງທຸກຂັ້ນ ຕ້ອງຊີ້ນຳ-ນຳພາວຽກງານກວດກາລັດໃຫ້ມີການເຄື່ອນໄຫວຕາມພາລະບົດບາດເປັນປົກກະຕິ ເພື່ອສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ. ຢາກບໍລິຫານລັດໄດ້ດີ ຕ້ອງມີລະບົບຕິດຕາມກວດກາທີ່ດີ, ຢາກຕິດຕາມ ກວດກາໄດ້ດີ ຕ້ອງມີລະບອບ, ລະບຽບ ແລະ ກົນໄກຄົບຊຸດ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ ປານຄຳ ຂະຫຍອງເອກ (2025) ຜົນການປະເມີນແນວທາງການພັດທະນາການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາ ຂອງຄະນະເລຂາທິການສະພາແຫ່ງຊາດ ໂດຍລວມມີຄວາມເໝາະສົມ ແລະ ມີຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ.

**5. ສະຫຼຸບ**

ສະພາບການຈັດຕັ້ງປະຕິບັດວຽກງານກວດກາ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບຫຼາຍ; ດ້ານທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ ແມ່ນດ້ານວຽກງານການຕິດຕາມ ແລະ ປະເມີນຜົນ, ຮອງລົງມາແມ່ນດ້ານການກວດກາພັກ, ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ.

ຄວນກຳນົດແຜນການກວດກາໃຫ້ຊັດເຈນ ແລະ ດຳເນີນການຢ່າງສະໝໍ່າສະເໝີ; ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳດ້ານການກວດກາ; ເປີດໂອກາດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງ-ປັບປຸງນິຕິກຳໃຫ້ເໝາະສົມ; ດຳເນີນຄະດີ ແລະ ວິໄນຢ່າງເຂັ້ມງວດຕໍ່ການສໍ້ລາດບັງຫຼວງ; ຄົ້ນຄວ້າຄຳຮ້ອງ-ຄຳສະເໜີຢ່າງຄົບຖ້ວນ, ຖືກຕ້ອງ, ເປັນທຳ ແລະ ປັບປຸງກົງຈັກຢ່າງມີຈຸດສຸມ ໂດຍໃຫ້ພະນັກງານມີສ່ວນຮ່ວມ.

ຜົນການປະເມີນຂໍ້ສະເໜີແນະໃນການປະຕິບັດວຽກງານກວດກາຂອງກະຊວງສຶກສາທິການ ແລະ ກິລາ ໂດຍລວມ ມີຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍ, ດ້ານທີ່ມີຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຫຼາຍກວ່າໝູ່ແມ່ນ ດ້ານວຽກງານຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ມີຄວາມເໝາະສົມ ຢູ່ໃນລະດັບຫຼາຍທີ່ສຸດ ແຕ່ມີຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນດ້ານການກວດກາລັດ ມີຄວາມເໝາະສົມຢູ່ໃນລະດັບຫຼາຍທີ່ສຸດ, ສ່ວນຄວາມເປັນໄປໄດ້ ແມ່ນການກວດກາພັກ ຢູ່ໃນລະດັບຫຼາຍ ແລະ ດ້ານທີ່ມີຄວາມເໝາະສົມໜ້ອຍກວ່າໝູ່ແມ່ນດ້ານການຄົ້ນຄວ້າ, ປັບປຸງ ແລະ ເຜີຍແຜ່ນິຕິກຳ. ສ່ວນຄວາມເປັນໄປໄດ້ໜ້ອຍກວ່າໝູ່ແມ່ນ ດ້ານການປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານກວດກາ ຢູ່ໃນລະດັບຫຼາຍ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**

*ກະຊວງສຶກສາທິການ ແລະ ກິລາ. (2021). ບົດສະຫຼຸບການເຄື່ອນໄຫວວຽກງານກວດກາ 5 ປີ (2016-2020).* ນະຄອນຫຼວງວຽງຈັນ: ກົມກວດກາ.

ກະຊວງສຶກສາທິການ ແລະ ກິລາ. (2024). *ບົດສະຫຼຸບການເຄື່ອນໄຫວວຽກງານກວດກາປີ 2023 ແລະ ທິດທາງແຜນການປີ 2024.* ນະຄອນຫຼວງວຽງຈັນ: ກົມກວດກາ.

ຂະຫຍອງເອກ, ປ. (2025). *ແນວທາງການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາ ຂອງສະພາແຫ່ງຊາດ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

ຄະນະກວດກາສູນກາງພັກ. (2018). *ເອກະສານຝຶກອົບຮົມວຽກງານກວດກາພັກ ແລະ ກວດກາລັດ.* ນະຄອນຫຼວງວຽງຈັນ: ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ.

ຄະນະບໍລິຫານງານສູນກາງພັກ. (2016). *ເອກະສານກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ສີສະອາດ, ບ. (2003). *ການວິໄຈເບື້ອງຕົ້ນ (ຈັດພິມຄັ້ງທີ 6).* ກຸງເທບ: ສຸລິຍາສານ ການພິມ.

ສີສະອາດ, ບ. (2011). *ການວິໄຈເບື້ອງຕົ້ນ ພິມຄັ້ງທີ 7.* ກຸງເທບ: ສຸວິຣິຍາສານ.

ດໍາຣົງ, ສ. (2021). *ການມີສ່ວນຮ່ວມຂອງພະນັກງານໃນການປະຕິບັດວຽກງານກວດກາ ຢູ່ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

ພົມທະວົງ, ວ. (2024). *ຍົກສູງຄຸນນະພາບວຽກງານກວດກາພັກ ຢູ່ ສປປ ລາວ.* ນະຄອນຫຼວງວຽງຈັນ: ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ລັດຖະບານ ແຫ່ງ ສປປ ລາວ. (2021). *ດໍາລັດວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງສຶກສາທິການແລະກິລາ.* ນະຄອນຫຼວງວຽງຈັນ.

ວົງວິໄນ, ບ. (2021). *ເພີ່ມທະວີການກວດກາ ຂະແໜງສຶກສາ ແລະ ກິລາ ຢູ່ປະເທດເຮົາ.* ນະຄອນຫຼວງວຽງຈັນ: ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ເຮົ້າສຸກຂັນສາ, ພ. (2024). *ຍົກສູງຄຸນນະພາບວຽກງານຕິດຕາມກວດກາພັກ-ລັດ ຢູ່ແຂວງຜົ້ງສາລີ.* ນະຄອນຫຼວງວຽງຈັນ: ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ແກ້ວຄໍາດີ, ມ. (2021). *ຄວາມເພິ່ງພໍໃຈຂອງພະນັກງານຕໍ່ກັບວຽກງານກວດກາ ທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

Stufflebleam., L. D. (1975). *The Mateavaluation imperative. Peabody Journal of Education, 52*(1), 56–59.

Cronbach. J. L. (1990). *Essential of Psychological testing.* New York: Harper&Row.